United Nations Secretary-General's Campaign UNiTE to END VIOLENCE AGAINST WOMEN

16 ສິ່ງທີ່ທ່ານຄວນເຮັດ ເພື່ອຊ່ວຍ ສິ້ນສຸດຄວາມຮຸນແຮງ ຕໍ່ກັບແມ່ຍິງ ແລະ ເດັກຍິງ

1 ບອກທຸກຄົນວ່າ ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງແມ່ນບໍ່ເຄີຍເປັນທີ່ຍອມຮັບ.

ແມ່ຍິງທຸກຄົນມີສິດ ເພື່ອເຮັດໃຫ້ຊີວິດຂອງພວກເຂົາປາສະຈາກຄວາມຮຸນແຮງ

16 ມື້ ຂອງການເຄື່ອນໄຫວຣິນນະລົງຕ້ານຕໍ່ຄວາມຮຸນແຮງ ທາງດ້ານ ບົດບາດ ຍິງ-ຊາຍ ແມ່ນການຣິນນະລົງທາງສາກົນນັ້ນ ໄດ້ເລີ່ມມາແຕ່ ປີ 1991. ແຕ່ວັນທີ 25 ພະຈິກ, ແມ່ນວັນຣິນນະລົງທາງສາກົນເພື່ອກຳຈັດ ທຸກຮູບແບບຂອງຄວາມຮຸນແຮງຕໍ່ກັບແມ່ຍິງ, ຈົນມາຮອດວັນທີ 10 ທັນວາ ຊຶ່ງເປັນວັນສິດທິມະນຸດສາກົນ, ການຣິນນະລົງຮຽກຮ້ອງໃຫ້ບຸກຄົນ ແລະ ກຸ່ມຄົນໃນທົ່ວໂລກ ເພື່ອພ້ອມກັນສິ້ນສຸດຄວາມຮຸນແຮງທຸກຮູບແບບຕໍ່ກັບ ແມ່ຍິງ ແລະ ເດັກຍິງ.

2 ຖ້າທ່ານສົງໄສວ່າແມ່ຍິງທີ່ຢູ່ໃກ້ຕົວທ່ານແມ່ນກຳລັງຖືກລ່ວງລະເມີດ, ໃຫ້ຟັງ ແລະ ສະໜັບສະໜູນລາວ. ບອກລາວວ່າມີຫລາຍຄົນຕ້ອງການຊ່ວຍເຫລືອລາວ.

3 ເຂົ້າໃຈວ່າແມ່ຍິງເມື່ອຸພວກເຂົາບອກທ່ານກ່ຽວກັບພວກເຂົາຖືກຂົ່ມຂືນ ຫລື ຖືກລ່ວງລະເມີດ. ບໍ່ຕ້ອງຖາມກ່ຽວກັບການປະພຶດຂອງພວກເຂົາ ແລະ ແມ່ນຫຍັງທີ່ພວກເຂົາເຈົ້ານຸ່ງຖື. ຮັບຟັງແມ່ນຫຍັງທີ່ພວກເຂົາເວົ້າໂດຍ ບໍ່ຕ້ອງຕັດສິນພວກເຂົາ. ແມ່ຍິງບໍ່ເຄີຍຖາມຫາ ແລະ ກໍບໍ່ສົມຄວນທີ່ ຈະຖືກຂົ່ມຂືນ ຫລືຖືກລ່ວງລະເມີດ.

10 ສະໜັບໃຈເພື່ອເຮັດວຽກໃນໂຄງການ ເພື່ອປ້ອງກັນຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງຢູ່ຊຸມຊົນຂອງທ່ານເອງ.

11 ສ້າງການຕັດສິນໃຈ ຮ່ວມກັນກັບ ແມ່ຍິງໃນຊີວິດຕົວຈິງຂອງທ່ານ. ປຶກສາຫາລືໃນສິ່ງຕ່າງໆກັບເມັຍ ຂອງທ່ານ ແລະ ເຄົາລົບຄຳຄິດເຫັນ ຂອງລາວ.

4 ສຶກສາເບິ່ງວ່າຄວາມ ຮຸນແຮງຕໍ່ກັບແມ່ຍິງ ແລະ ແມ່ນຫຍັງ ຄືສາເຫດຂອງມັນ. ການສຶກສາຂອງ ທ່ານແມ່ນເຄື່ອງມື ໜຶ່ງເພື່ອສິ້ນສຸດມັນ.

5 ສອນເດັກຊາຍ ແລະ ຊາຍໜຸ່ມ ກ່ຽວກັບ ຄວາມເປັນຊາຍ ໃນທາງທີ່ບໍ່ຫຍຸ້ງກ່ຽວກັບ ຄວາມເປັນອັນຕະລາຍ ຫລື ລ່ວງລະເມີດ ຕໍ່ເດັກຍິງ ແລະ ແມ່ຍິງ. ດ້ວຍການເປັນແບບ ເປັນຢ່າງທີ່ດີ.

6 ກະຕຸກຊຸກຍູ້ ແລະ ສະໜັບສະໜູນຄົນທີ່ ຢູ່ໃນຊຸມຊົນຂອງທ່ານ ເຮັດວຽກເພື່ອສິ້ນ ສຸດທຸກຮູບແບບຂອງ ຄວາມຮຸນແຮງຕໍ່ກັບ ແມ່ຍິງ ແລະ ເດັກຍິງ.

7 ລົມກັບສະມາຊິກໃນຄອບຄົວ ແລະ ຊຸມຊົນ ກ່ຽວກັບວ່າຄວາມຮຸນແຮງ ແລະ ຄວາມຢ້ານກົວອັນໃດ ຕໍ່ກັບຄວາມຮຸນແຮງທີ່ ກະທົບຕໍ່ກັບ ຊີວິດປະຈຳວັນຂອງແມ່ຍິງ ແລະ ເດັກຍິງ. ລົມກ່ຽວ ກັບວ່າພວກທ່ານ ສາມາດສະໜັບສະໜູນກັນແນວໃດ ເພື່ອຊ່ວຍ ສິ້ນສຸດຄວາມຮຸນແຮງ.

8 ເຮັດໃຫ້ຄອບຄົວຂອງ ທ່ານເອງບໍ່ມີຄວາມ ຮຸນແຮງ. ເດັກຜູ້ທີ່ ເປັນພະຍານ ຫລື ໄດ້ຮັບຄວາມເຈັບປວດ ຈາກ ຄວາມຮຸນແຮງທີ່ ອີງໃສ່ເລື່ອງເພດເປັນ ພື້ນຖານ, ມັກທີ່ຈະ ກາຍເປັນຜູ້ເຄາະຮ້າຍ ແລະ ຜູ້ຖືກລ່ວງລະ ເມີດຕໍ່ມາໃນຊີວິດ ຂອງພວກເຂົາ.

9 ຍົກສູງຄວາມສະເໝີພາບ ລະຫວ່າງລູກຊາຍ ແລະ ລູກສາວ ຂອງທ່ານ ແລະ ສອນ ພວກເຂົາວ່າບໍ່ມີສິ່ງໃດທີ່ຜູ້ຊາຍ ສາມາດເຮັດແລ້ວແມ່ຍິງບໍ່ ສາມາດເຮັດໄດ້.

12 ຖ້າທ່ານຮູ້ສຶກວ່າໃຈຮ້າຍ, ໃຫ້ນັບ ແຕ່ 1 ຮອດ 10 ກ່ອນບຳໄປສູ່ບາງສິ່ງບາງຢ່າງ ທີ່ທ່ານໄດ້ຍິນ ຫລື ເຫັນ.

13 ຖ້ານ້ອງຊາຍ ຫລື ອ້າຍ, ເພື່ອນ, ເພື່ອໃນຫ້ອງຮຽນ ຫລື ທີມງານ ເຮັດວຽກ ຫາກມີພຶດຕິກຳບໍ່ເປັນທີ່ໜ້ານັບຖື ຫລື ກຳລັງລ່ວງລະ ເມີດຕໍ່ກັບແມ່ຍິງ ຫລືເດັກຍິງ ຜູ້ໃດໜຶ່ງ, ບໍ່ຕ້ອງໄປເບິ່ງອື່ນໃດ ໃຫ້ຊອກຫາວິທີທາງເພື່ອລົມກ່ຽວກັບສິ່ງເຫລົ່ານັ້ນກັບພວກ ເຂົາແທນ. ຈື່ໄວ້ວ່າການນິ່ງງຽບແມ່ນກຳລັງຢືນຢັນ ເມື່ອໃດຫາກເຮົາເລືອກທີ່ຈະບໍ່ເວົ້າອອກມາກ່ຽວກັບຄວາມ ຮຸນແຮງຕໍ່ກັບແມ່ຍິງ, ພວກເຮົາແມ່ນກຳລັງສະໜັບສະໜູນມັນ.

14 ຄຳເວົ້າແມ່ນມີອິດທິພົນຫລາຍ, ໂດຍສະເພາະເມື່ອຖືກເວົ້າໂດຍຄົນທີ່ມີອຳນາດ. ກ່າວເຖິງວ່າແມ່ຍິງມີຄວາມສະເໝີພາບ ແລະ ຢ່າໃຊ້ຄຳເວົ້າທີ່ບໍ່ເຄົາລົບຕໍ່ກັບແມ່ຍິງ.

15 ມາຮ່ວມກັນເຄື່ອນໄຫວຣົນທະລົງ 16 ມື້ ສຳລັບ ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍ ຜູ້ທີ່ຕ້ອງການມີປາກມີສຽງເພື່ອຕ້ານຄວາມ ຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ.

ປະຕິເສດ UNiTE
ເພື່ອສິ້ນສຸດຄວາມຮຸນແຮງຕໍ່ກັບແມ່ຍິງ

ປະຕິເສດ-UNiTE ເພື່ອສິ້ນສຸດຄວາມຮຸນແຮງຕໍ່ກັບແມ່ຍິງແມ່ນພື້ນຖານສາກົນເພື່ອການສະໜັບສະໜຸນ ແລະ ການກະທຳທີ່ແຂງແຮງ ແລະ ການບັນທຶກຕ່າງໆ ແມ່ນຫຍັງທີ່ບຸກຄົນຕ່າງໆ, ອົງການຈັດຕັ້ງຕ່າງໆ ແລະ ລັດຕ່າງໆທົ່ວໂລກ ແມ່ນກຳລັງດຳເນີນການ ເພື່ອສິ້ນສຸດຄວາມຮຸນແຮງຕໍ່ກັບແມ່ຍິງ. ຫລື ທ່ານຈັດກອງປະຊຸມປຶກສາຫາລືຕ່າງໆ, ຂະຫຍາຍໄປສູ່ນຶກສຶກສາ, ສະໜັບສະໜຸນທີ່ແຂງແຮງ ເພື່ອອອກນະໂຍບາຍທີ່ດີ, ຫລື ຈັດຕັ້ງປະຕິບັດ ກົດໝາຍໃໝ່, ແຈ້ງການກະທຳຂອງທ່ານໄປຍັງ ເວບໄຊ: **saynotoviolence.org**

ທ່ານເລຂາທິການໃຫ່ຍແຫ່ງສະຫະປະຊາຊາດ ບັນ ກີ ມຸນ UNiTE ເພື່ອສິ້ນສຸດຄວາມຮຸນແຮງຕໍ່ກັບແມ່ຍິງ ການຣິນນະລົງມີເປົ້າໝາຍເພື່ອປ້ອງກັນ ແລະ ກຳຈັດ ທຸກຮູບແບບຂອງຄວາມຮຸນແຮງທີ່ມີຕໍ່ແມ່ຍິງ ແລະ ເດັກຍິງ ທົ່ວທຸກພາກສ່ວນຂອງໃນປີ 2015.

ໂດຍຜ່ານ UNiTE ລະບົບຂອງຢູເອັນທັງໝົດ ແມ່ນກຳລັງຮ່ວມກັນຜັກດັນກັບລັດຖະບານຕ່າງໆ, ພາກສັງຄົມພົນລະເຮືອນ, ອົງການຈັດຕັ້ງຂອງ ແມ່ຍິງ, ຄົນໜຸ່ມ-ສາວ, ສື່ມວນຊົນ ແລະ ພາກສ່ວນເອກະຊົນ ເພື່ອຍົກສູງສະຕິຄວາມຕື່ນຕົວທາງ ສາທາລະນະ, ເພີ່ມເຈດຕະນາທາງການເມືອງ ແລະ ຊັບພະຍາກອນ, ການເປັນຄູ່ຮ່ວມງານທີ່ເຂັ້ມແຂ່ງ ເພື່ອສິ້ນສຸດຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ.

ຂໍ້ມູນເພີ່ມຕື່ມ ທ່ານສາມາດເຂົ້າໄປເບິ່ງທີ່:
unitetoendviolence.org

16

ບອກພວກເຮົາໃຫ້ຮູ້ວ່າແມ່ນຫຍັງທີ່ທ່ານໄດ້ເຮັດແລ້ວ ເພື່ອຢຸດຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ. ພວກເຮົາຢາກຮຽນຮູ້ຈາກຕົວຢ່າງຂອງທ່ານ!

United Nations Secretary-General's Campaign UNiTE to END VIOLENCE AGAINST WOMEN